**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ອະນຸກຳມະການຈັດການແຂ່ງຂັນ ເລກທີ: 001 /ກຕສ.ກຄຊ

ນະຄອນຫຼວງວຽງຈັນ, ວັນທີ: 05 ທັນວາ 2023

# ໜັງສືເຊີນ

**ຮຽນ/ເຖິງ**: ບັນດາການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ ແລະ ນັກຮຽນນັກສຶກສາ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ຂໍເຊີນຊວນເຂົ້າຮ່ວມການແຂ່ງຂັນ Lao Digital Award 2024.

- ອີງຕາມ ຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບກະກຽມ ແລະ ດຳເນີນງານ ສັບປະດາດິຈິຕອນ ປະຈຳປີ 2024 ສະບັບເລກທີ 4349/ກຕສ, ລົງວັນທີ 31 ຕຸລາ 2023.

ໃນນາມອະນຸກຳມະການຈັດການແຂ່ງຂັນ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຂໍແຈ້ງມາຍັງທ່ານຊາບໃນຕົ້ນເດືອນ ມັງກອນ ລະຫວ່າງວັນທີ 10-14 ມັງກອນ 2024 ທາງ ກະຊວງ ຕສ ຈະໄດ້ຈັດງານ ສັບປະດາດິຈິຕອນ ປີ 2024 (Digital Week 2024) ເຊິ່ງໃນງານດັ່ງກ່າວມີຫຼາກຫຼາຍກິດຈະກຳຈະຈັດຂຶ້ນຢ່າງເປັນຂະບວນການຟົດຟື້ນເຊັ່ນ: ງານວາງສະແດງ, ກອງປະຊຸມສຳມະນາ, ເວທີການພົບປະ (Networking Forum), ກິດຈະກຳແຂ່ງຂັນ ICT, Startup and Innovation Awards ແລະ ການແຂ່ງຂັນ Lao Cyber Security Hacking Challenge. ສະນັ້ນ, ຈຶ່ງຂໍຮຽນເຊີນບັນດາການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ ແລະ ນັກຮຽນ-ນັກສຶກສາ ໃນຂອບເຂດທົ່ວປະເທດ ຜູ້ທີ່ມີຜະລິດຕະພັນ ທີ່ນຳໃຊ້ເຕັກໂນໂລຊີດິຈິຕອນ, ສະຕາດອັບ ແລະ ນະວັດຕະກຳໃໝ່ສົ່ງຜົນງານຂອງຕົນເຂົ້າຮ່ວມການແຂ່ງຂັນ Lao ICT, Startup and innovation Award 2024 ແລະ ການແຂ່ງຂັນ Lao Cyber Security Hacking Challenge. ຊຶ່ງລາຍລະອຽດເງື່ອນໄຂ ແລະ ວິທີການສະໝັກມີດັ່ງລຸ່ມນີ້:

- ວັນທີເປີດ-ປິດ: ນັບຕັ້ງແຕ່ມື້ປະກາດນີ້ເປັນຕົ້ນໄປ ຈົນເຖິງວັນທີ 20/12/2023;
- ສຳລັບເງື່ອນໄຂຜູ້ເຂົ້າຮ່ວມແຂ່ງຂັນ: ຕ້ອງເປັນບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ແລະ ນັກຮຽນ-ນັກສຶກສາ ພາຍໃນ ສປປ ລາວ;
- ວິທີການສະໝັກ ແລະ ລາຍລະອຽດຕ່າງໆ ທ່ານສາມາດເຂົ້າເບິ່ງໄດ້ທີ່ເວັບໄຊ: www.Laoictaward.gov.la ຫຼື ທ່ານສາມາດພົວພັນສອບຖາມຂໍ້ມູນເພີ່ມເຕີມ: **Whatsapp**: 020 58318609, 020 78719133, 020 59072219 **Facebook:** LaoICTAward.Official, **E-Mail:** laoictaward@gmail.com.
- ການແຂ່ງຂັນ Lao Cyber Security Hacking Challenge ແມ່ນຈະເປີດລົງທະບຽນ ຜ່ານເວັບໄຊ https://cyberus.la/ ແລະ ເຟສບຸກແຟນເຟສ Laocert ຊຶ່ງຈະແຈ້ງເງື່ອນໄຂລາຍລະອຽດຂອງຜູ້ເຂົ້າຮ່ວມແຂ່ງຂັນ.

ດັ່ງນັ້ນ, ຈຶ່ງຂໍເຊີນຊວນມາຍັງບັນດາທ່ານ ເພື່ອເຂົ້າຮ່ວມການແຂ່ງຂັນຕາມເງື່ອນໄຂທີ່ລະບຸໄວ້.

**ເຊັນແທນຫົວໜ້າອະນຸກຳມະການຈັດການແຂ່ງຂັນ**

ສະແກນເບິ່ງຂໍ້ມູນ

**ພວງປະເສີດ ແກ້ວສຸວັນ**